ໂຄງການລິເລີ່ມການລົງທຶນດ້ານການຂົນສົ່ງທີ່ເປັນມິດຕໍ່ສິ່ງແວດລ້ອມ ໃນ ສປປ ລາວ

Groundworks for E-Mobility Investment in Lao PDR

ນຳສະເໜີໂດຍ: ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ

ຫົວຂໍ້ນຳສະເໜີ

1. ບ່ອນອີງການຈັດຕັ້ງປະຕິບັດ
2. ຈຸດປະສົງ ແລະ ເປົ້າໝາຍ
3. ການຜັນຂະຫຍາຍ ນິຕິກຳລຸ່ມກົດໝາຍ
4. ເງື່ອນໄຂ ການກຳນົດມາດຕະຖານເຕັກນິກດ້ານຄວາມປອດໄພ ຂອງຍານພາຫະນະທາງບົກ
5. ສະຫຼຸບ
6. ຄາຍໝາຍການ ຈັດຕັ້ງປະຕິບັດ


ບ່ອນອີງໃນການຈັດຕັ້ງປະຕິບັດ

1. ກົດໝາຍວ່າດ້ວຍຍານພາຫະນະທາງບົກ ສະບັບເລກທີ 04/ສພຊ, ລົງວັນທີ 16 ພະຈິກ 2021
2. ດຳລັດວ່າດ້ວຍທຸລະກິດຍານພາຫະນະທາງບົກ ສະບັບເລກທີ 470/ລບ, ລົງວັນທີ 27 ທັນວາ 2019
3. ມະຕິວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ນະໂຍບາຍການນຳໃຊ້ລົດໄຟຟ້າ ໃນ ສປປ ລາວ ສະບັບເລກທີ 08/ລບ, ລົງວັນທີ 4 ຕຸລາ 2021
4. ຍຸດທະສາດແຫ່ງຊາດ ດ້ານຄວາມປອດໄພທາງຫຼວງ ໄລຍະປີ 2021ຫາ 2030 ແລະ ແຜນດຳເນີນງານ ລຍະປີ 2021-2025
5. ສົນທິສັນຍາສາກົນວ່າດ້ວຍການຮັບຮູ້ເຊິ່ງກັນ ແລະ ກັນ ວ່າດ້ວຍ ຜະລິດຕະພັນຍານພາຫະນະອາຊຽນ APMRA
6. ບົດລາຍງານທາງດ້ານເຕັກນິກ ນະໂຍບາຍສົ່ງເສີມ ແລະ ການພັດທະນາມາດຕະຖານເຕັກນິກຂອງລົດໄຟຟ້າໃນ ສປປ ລາວ ສະບັບ ເດືອນ ສິງຫາ 2021

ປະຫວັດຄວາມເປັນມາ ແລະ ການຈັດຕັ້ງປະຕິບັດ

ກົມຂົນສົ່ງ ໄດ້ ປຶກສາຫາລື ກັບ GGGI ຂໍໂຄງການ ຈາກ ກອງທຶນ ປ່ຽນແປງດິນຟ້າອາກາດສາກົນ GCF ໂດຍຜ່ານກົມແຜນການ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນນາມ ຈຸດ ປະສານງານແຫ່ງຊາດ NDA ຂອງ ກອງທຶນ GCF

ໄດ້ຮັບອະນຸມັດໂຄງການ ຈາກ GCF ແລະ ກະຊວງແຜນການ ແລະ ການລົງທຶນ



ສືບຕໍ່ ແລະ ປັບປຸງນິຕິກຳ ວ່າດ້ວຍການຄຸ້ມ ຄອງການຂຶ້ນທະບຽນ ຍານພາຫະນະ ທາງບົກ ໃຫ້ສຳເລັດ ໃນເດືອນ ກຸມພາ 2024 ແລະ ເປີດນຳໃຊ້ເວັບໄຊ ໂຄງການ www.ev.mtsvte.com ພາຍໃນຕົ້ນ ເດືອນ ມີນາ 2024

2020 → 2021 → 2022 → 2023 → 2024

ສຳເລັດ ໂຄງການ ທ້າຍເດືອນມີນາ 2024

ນຳສົ່ງ Project Proposal ຫາ GCF

ອົງປະກອບ:

1. ສ້າງແລະ ປັບປຸງນິຕິກຳ ການຄຸ້ມຄອງພະຫະນະ
2. ສຶກສາ ການນວາງນະໂຍບາຍການຈຳກັດການນຳໃຊ້ ຍານພາຫະນະ ທີ່ ນຳໃຊ້ນ້ຳມັນເຊື້ອໄຟໃນ ສປປ ລາວ ICE Phase out Policy ສ້າງເວບໄຊ ສົ່ງເສີມ ການນຳໃຊ້ ລົດ EV ຂອງຂະແໜງ ຍທຂ
3. ຈັດຝຶກອົບຮົມການກວດກາສະພາບເຕັກນິກ ລົດ EV

ພາຍຫຼັງໄດ້ຮັບ ອະນຸມັດໂຄງການ

1. ຈັດຈ້າງຊື່ບໍລິສັດ ທີ່ປຶກສາ ມາສຶກສາໂຄງການ ແລະ ສ້າງເວັບໄຊ (ໂດຍ GGGI)
2. ລິ່ເລີ່ມເດືອນ ເມສາ 2024 ແລະ ສຳເລັດ ຄື:
3. ສຶກສາການວາງນະໂຍບາຍ ICE Phaseout policy
4. ໃຫ້ຄຳປຶກສາ ການຮ່າງນິຕິກຳມາດຕະຖານເຕັກນິກຄວາມປອດໄພ ຍານພາຫະນະທາງ, ສູນ ກວດກາເຕັກນິກລົດ EV ແລະ ການຂຶ້ນທະບຽນ ແລະ ການຄຸ້ມຄອງຍານພາຫະນະທາງບົກ
5. ຈັດຝຶກອົບຮົມການກວດກາເຕັກນິກລົດ EV
6. ສ້າງເວັບໄຊ ສົ່ງເສີມ ການນຳໃຊ້ ລົດ EV ຂອງຂະແໜງການ ຍທຂ www.ev.mtsvte.com

ຈຸດປະສົງ ແລະ ເປົ້າໝາຍ

1. ຜັນຂະຫຍາຍ ບັນດາມາດຕາ ທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍຍານພາຫະນະທາງບົກ ສະບັບເລກທີ 04/ສພຊ, ລົງວັນທີ 16 ພະຈິກ 2021 ແລະ ດຳລັດວ່າດ້ວຍທຸລະກິດ ຍານພາຫະນະທາງບົກ ສະບັບເລກທີ 470/ລບ, ລົງວັນທີ 27 ທັນວາ 2019
2. ປະຕິບັດຕາມ ມະຕິວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ນະໂຍບາຍການນຳໃຊ້ລົດໄຟຟ້າ ໃນ ສປປ ລາວ ສະບັບເລກທີ 08/ລບ, ລົງວັນທີ 4 ຕຸລາ 2021
3. ຜັນຂະຫຍາຍ ການຈັດຕັ້ງປະຕິບັດ ບົດລາຍງານທາງດ້ານເຕັກນິກ ນະໂຍບາຍສົ່ງເສີມ ແລະ ການພັດທະນາມາດຕະຖານເຕັກນິກຂອງລົດໄຟຟ້າໃນ ສປປ ລາວ ສະບັບເດືອນ ສິງຫາ 2021
4. ປະຕິບັດຕາມ ສົນທິສັນຍາສາກົນວ່າດ້ວຍການຮັບຮູ້ເຊິ່ງກັນ ແລະ ກັນ ວ່າດ້ວຍ ຜະລິດຕະພັນຍານພາຫະນະອາຊຽນ APMRA
5. ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂ ບັນຫາ ການປ່ຽນແປງດິນຟ້າອາກາດ Nationally Determined Contribution “NDC” ສະບັບ 9 ມີນາ 2021
6. ປ່ຽນຮູບແບບການຄຸ້ມຄອງ ໃຫ້ເປັນຮູບແບບໃໝ່ ການກຳນົດມາດຕະຖານເຕັກນິກຄວາມປອດໄພ, ການນຳເຂົ້າ, ການຜະລິດ/ປະກອບ, ລະບົບຢັ້ງຢືນ, ການທົດສອບ, ການ ລົງກວດກາຄະບວນການຜະລິດ COP ການແບ່ງຄວາມຮັບຜິດຊອບ ຂອງ ບັນດາກະຊວງ ທີ່ ກ່ຽວຂ້ອງໃນການນຳເຂົ້າ ພາຫະນະທາງບົກ
7. ຫຼຸດຜ່ອນການນຳເຂົ້າຍານພາຫະນະທີ່ບໍ່ໄດ້ ຄຸນນະພາບ, ຄວາມຮັບຜິດຊອບ ຕໍ່ສິນຄ້າ ຈາກການນຳເຂົ້າ ໂດຍຜູ້ນຳເຂົ້າອິດສະຫຼະ ແລະ
8. ປ່ຽນແທນ ນິຕິກຳ ສະບັບເກົ່າ ທີ່ ນຳໃຊ້ ແຕ່ປີ 2000 ແລະ 2001 ແລະ ສ້າງ ແລະ ປັບປຸງ ນິຕິກຳ ເພື່ອຄຸ້ມຄອງ ການຂຶ້ນທະບຽນ ການຄຸ້ມຄອງພາຫະນະ, ສູນກວດກາ ເຕັກນິກ ການກຳນົດເງື່ອນໄຂ, ມາດຕະຖານການກວດກາ, ຄ່າມາດຕະຖານ ການກວດກາ ແລະ ວິທີການກວດກາ ຍານພາຫະນະ ທີ່ນຳໃຊ້ໄຟຟ້າ ແລະ ນ້ຳມັນ
9. ສ້າງເຄື່ອງມືໃນການສົ່ງເສີມ ແລະ ການໂຄສະນາ ການນຳໃຊ້ລົດໄຟຟ້າ EV ໃນ ສປປ ລາວ ໂດຍການສ້າງ ເວັບໄຊ www.ev.mtsvte.com ໃຫ້ ຂະແໜງ ຍທຂ

ຈຸດປະສົງ ແລະ ເປົ້າໝາຍ

1. ຂໍ້ຕົກລົງວ່າດ້ວຍມາດຕະຖານຄວາມປອດໄພຂອງຍານພາຫະນະ ທີ່ ຈະນຳເຂົ້າ, ຜະລິດ, ປະກອບ ເພື່ອຈະຈຳໜ່າຍ ໃນ ສປປ ລາວ,
2. ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງສູນກວດກາເຕັກນິກຍານພາຫະນະທາງບົກ ໃນ ສປປ ລາວ.
3. ຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນ ແລະ ການຄຸ້ມຄອງຍານພາຫະນະທາງບົກ ຂອງ ສປປ ລາວ,
4. ການຈັດຝຶກອົບຮົມການກວດກາສະພາບເຕັກນິກຍານພາຫະນະທາງບົກ
5. ສ້າງບົດລາຍງານ ການຈຳກັດການນຳໃຊ້ພາຫະນະທີ່ນຳໃຊ້ນຳມັນເຊື້ອໄຟ ໃນ ສປປ ລາວ,
6. ສ້າງບົດສຶ່ສານການສົ່ງເສີມ ການນຳໃຊ້ລົດໄຟຟ້າ ຢູ່ ສປປ ລາວ ແລະ
7. ສ້າງເວັບໄຊ ການສົ່ງເສີມ ການນຳໃຊ້ຍານພາຫະນະໄຟຟ້າ EV ໃຫ້ ກົມຂົນສົ່ງ ກະຊວງ ໂຍທາທິການ ແລະ ຂົນສົ່ງ.

ຄວາມຄືບໜ້າ ໃນການຜັນຂະຫຍາຍ ນິຕິກຳລຸ່ມກົດໝາຍ

1. ຮ່າງ ຂໍ້ຕົກລົງຂອງ ລັດຖະມົນຕີ ກະຊວງ ຍທຂ ກ່ຽວກັບການກຳນົດມາດຕະຖານດ້ານຄວາມປອດໄພ ຂອງຍານພາຫະນະທາງບົກ


1) ກຳນົດກົນໄກ ແລະ ເງື່ອນໄຂໃນການນຳເຂົ້າ, ການຜະລິດ ປະກອບ, ການຂຶ້ນທະບຽນ ໃນ ສປປ ລາວ ແລະ ການສົ່ງອອກ ໄປຕ່າງປະເທດ
   - ເງື່ອນໄຂຜູ້ຈະນຳເຂົ້າ ຫຼື ຕົວແທນຈຳໜ່າຍ
   - ການຈັດປະເພດລົດ ຕາມຕົວອັກສອນສາກົນ ຂອງ UNECE ເຊັ່ນ L, M, N, ແລະ O
   - ໂຮງງານຜະລິດ ແລະ ປະກອບ
   - ກຳນົດເງື່ອນໄຂການບໍລິຫານຈັດການສິ່ງເສດເຫຼືອ ຂອງ ຜູ້ນຳເຂົ້າ
2) ລະບົບຢັ້ງຢືນຄວາມປອດໄພ ຕາມກົນໄກຂອງສາກົນກຳນົດ ບົນພື້ນຖານຄວາມສອດຄ່ອງກັບ ລະບຽບກົດໝາຍ ແລະ ສົນທິສັນຍາສາກົນທີ ສປປ ລາວ ເປັນພາຄີ
   - ຄວາມປອດໄພຂອງໝໍ້ໄຟ, ກຳນົດມາດຕະຖານນ້ຳມັນເຊື້ອໄຟ, ກຳນົດການປ່ອຍມົນລະພິດ
   - ຄວາມແຮງ ທີ່ຈະອະນຸຍາດ, ຂະໜາດ, ລໍ້ ແລະ ເພົາຂອງຍານພາຫະນະ ໃຫ້ນຳເຂົ້າ ແລະ ຂຶ້ນທະບຽນ
   - ກຳນົດມາດຕະຖານຮູສາກໄຟ, ປະເພດການສາກໄຟຟ້າ Technology Charging, ມາດຕະຖານການປ້ອງກັນການຊ໋ອດ ລະຫວ່າງລົດ ກັບ ຕູ້ສາກ
   - ການຢັ້ງຢືນລົດແບບເປັນຄັນ ກ່ອນນຳເຂົ້າ, ຜະລິດ ແລະ ປະກອບ Vehicle Type Approval “VTA”
   - ການຢັ້ງຢືນຊິ້ນສ່ວນ Type Approval “TA”
   - ການທົດສອບ, ເງື່ອນໄຂການທົດສອບ ແລະ ການກວດກາຄວາມຖືກຕ້ອງຂະບວນການຜະລິດ COP
   - ການ ເອີ້ນຮຽກຄືນຍານພາຫະນະ Recall
6. ການແບ່ງຄວາມຮັບຜິດຊອບ ຂອງ ກະຊວງກ່ຽວຂ້ອງໃນການ ຄຸ້ມຄອງການນຳເຂົ້າ, ກະຊວງ ຍທຂ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ການຊວງການເງິນ


ການຜັນຂະຫຍາຍ ນິຕິກຳລຸ່ມກົດໝາຍ

- ມີ 6 ໝວດ
- 38 ມາດຕາ


- ແບບຟອມການຢັ້ງຢືນການນຳເຂົ້າ, ການຜະລິດ ແລະ ປະກອບ
- ແບບຟອມຂໍອະນຸຍາດນຳເຂົ້າ ຕາມກົນໄກ VTA
- ເອກະສານ ທີ ຕ້ອງສະໜອງ ກ່ອນນຳເຂົ້າ, ຜະລິດ ແລະ ປະກອບ











ເງື່ອນໄຂ ການກຳນົດມາດຕະຖານເຕັກນິຍາມພາຫະນະໃນອະນາຄົດ

ຮູບແບບການນຳເຂົ້າ

ປັດຈຸບັນ

1



ຜູ້ນຳເຂົ້າ

2

ກົມການນຳເຂົ້າ ແລະ ສົ່ງອອກ

3

ກົມຂົນສົ່ງ

4

ກະຊວງ ການເງິນ

ກົມພາສີ

ອະນາຄົດ

1



ຜູ້ນຳເຂົ້າ

2

ກົມຂົນສົ່ງ

3

ກົມການນຳເຂົ້າ ແລະ ສົ່ງອອກ

4

ກະຊວງ ການເງິນ

ກົມພາສີ

ຮູບແບບການນຳເຂົ້າ ແລະ ລະບົບຢັ້ງຢືນການນຳເຂົ້າຍານພາຫະນະ

ກະຊວງ ຍທຂ
ກົມຂົນສົ່ງ
(Approval Authority)

ອອກໃບຢັ້ງຢືນ

ຜູ້ ຜະລິດ/ນຳເຂົ້າ

+ ກວດກາຄວາມຖືຕ້ອງດ້ານເອກະສານ.

+ ນຳສົ່ງເອກະສານຂໍ້ມູນ ທາງດ້ານເຕັກນິກ (ອີງຕາມ ເງື່ອນໄຂກຳນົດ)

+ ກະກຽມຜະລິດຕະພັນ ພາຫະນະເປັນຄັນ / ຊິ້ນສ່ວນ ເພື່ອໄປທົດສອບ

+ ທົດສອບ

+ ລົງກວດກາຄວາມຖືກຕ້ອງຂະບວນການຜະລິດ COP (ໂຮງງານ)

+ ອອກໃບຢັ້ງຢືນຍານພາຫະນະເພື່ອຈະນຳເຂົ້າມາ ຜະລິດ, ປະກອບ ຜະລິດ ເພື່ອຈຳໜ່າຍໃນ ສປປ ລາວ.

Technical service


+ ສົ່ງຜົນທົດສອບ


ເງື່ອນໄຂ ການກຳນົດມາດຕະຖານເຕັກນິຍານພາຫະນະໃນອະນາຄົດ

ການຄຸ້ມຄອງການນຳເຂົ້າເປັນຄັນ CBU


ຕົວແທນຈຳໜ່າຍ ທີ່ ໄດ້ຮັບລິຂະສິດນຳເຂົ້າຍານພາຫະນະທາງບົກ ຈາກບໍລິສັດ ແມ່ ຕ້ອງປະຕິບັດ ດັ່ງນີ້:

1. ຕ້ອງນຳສົ່ງ ສຳເນົາຮູບແຕ້ມການອອກແບບລົດ (Drawing) ຍີ່ຫໍ້, ລຸ້ນ ທີ່ຈະນຳເຂົ້າ ມາຈຳໜ່າຍ ໃນ ສປປ ລາວ ໃຫ້ ກົມຂົນສົ່ງ ກະຊວງ ຍທຂ ກ່ອນ ພາຍໃນ 3-6 ເດືອນ ກ່ອນຈະອະນຸຍາດນຳເຂົ້າ
2. ນຳສົ່ງຂໍ້ມູນ ລະອຽດທາງດ້ານເຕັກນິກ ຂອງ ລົດ ລຸ້ນ ທີ່ມາຈຳໜ່າຍ ເຊັ່ນ:
   - ບົດລາຍງານຜົນການທົດສອບ Test Report
   - ໃບຢັ້ງຢືນການທົດສອບTest Certificate ຂອງຊິ້ນສ່ວນ ຍານພາຫະນະ ຕາມສົນທິສັນຍາ MRA ຕາມແຕ່ລະໄລຍະ,
   - ໃບຢັ້ງການປະເມີນຄວາມປອດໄພຂອງຍານພາຫະນະ NCAP (ປະເພດລົດເບົາ), ການປ່ອຍມົນລະພິດ ແລະ ອື່ນໆ










ເງື່ອນໄຂ ການກຳນົດມາດຕະຖານເຕັກນິກຍານພາຫະນະໃນອະນາຄົດ

ການຄຸ້ມຄອງການນຳເຂົ້າຊິ້ນສ່ວນ

ໂຮງງານປະກອບ ທີ່ ໄດ້ຮັບລິຂະສິດຜະລິດ ຫຼື ປະກອບ ຍານພາຫະນະທາງບົກ ຈາກບໍລິສັດ ແມ່ ຕ້ອງປະຕິບັດ ດັ່ງນີ້:

1. ຕ້ອງນຳສົ່ງ ສຳເນົາຮູບແຕ້ມຊິ້ນສ່ວນ (Drawing) ຍີ່ຫໍ້, ລຸ້ນ ທີ່ຈະນຳເຂົ້າ ມາປະກອບ/ຜະລິດ ໃນ ສປປ ລາວ ໃຫ້ ກົມຂົນສົ່ງ ກະຊວງ ຍທຂ ກ່ອນ ພາຍໃນ 3-6 ເດືອນ ກ່ອນຈະອະນຸຍາດນຳເຂົ້າ ມາປະກອບ/ຜະລິດ
2. ນຳສົ່ງຂໍ້ມູນ ລະອຽດທາງດ້ານເຕັກນິກ ຂອງ ຊິ້ນສ່ວນ ທີ່ ຈະນຳເຂົ້າມາປະກອບ/ຜະລິດ ເຊັ່ນ:
   - ບົດລາຍງານຜົນການທົດສອບ Test Report
   - ໃບຢັ້ງຢືນການທົດສອບTest Certificate ຂອງຊິ້ນສ່ວນ ຍານພາຫະນະ ຕາມສົນທິສັນຍາ MRA ຕາມແຕ່ລະໄລຍະ,





ເງື່ອນໄຂ ການກຳນົດມາດຕະຖານເຕັກນິກຍານພາຫະນະໃນອະນາຄົດ

ລົດທີ່ຈະຜະລິດ/ປະກອບ ພາຍໃນ

ໂຮງງານປະກອບ ທີ່ ໄດ້ຮັບລິຂະສິດ ຜະລິດ ຫຼື ປະກອບ ຍານພາຫະນະທາງບົກ ຈາກບໍລິສັດ ແມ່ ຕ້ອງປະຕິບັດ ດັ່ງນີ້:

1. ຕ້ອງນຳສົ່ງ ສຳເນົາຮູບແຕ້ມພາຫະນະ (Drawing) ຍີ່ຫໍ້, ລຸ້ນ ທີ່ຈະ ມາປະກອບ/ຜະລິດ ໃນ ສປປ ລາວ ໃຫ້ ກົມຂົນສົ່ງ ກະຊວງ ຍທຂ ກ່ອນ ພາຍໃນ 4-6 ເດືອນ ກ່ອນຈະນຳມາປະກອບ/ຜະລິດ
2. ນຳສົ່ງຂໍ້ມູນ ລະອຽດທາງດ້ານເຕັກນິກ ຂອງ ຊິ້ນສ່ວນ ທີ່ ຈະນຳເຂົ້າມາປະກອບ/ຜະລິດ ເຊັ່ນ:
   - ບົດລາຍງານຜົນການທົດສອບ Test Report
   - ໃບຢັ້ງຢືນການທົດສອບTest Certificate ຂອງຊິ້ນສ່ວນ ຍານພາຫະນະ ຕາມສົນທິສັນຍາ MRA ຕາມແຕ່ລະໄລຍະ,
3. ພາຫະນະທີ່ ຜະລິດ/ປະກອບ ສຳເລັດ ກ່ອນຈະຈຳໜ່າຍ ແລະ ສົ່ງອອກ ຕ້ອງໄດ້ຜ່ານຂະບວນການ ນຳສົ່ງໄປທົດສອບ ແລະ ຢັ້ງຢືນຄວາມປອດໄພ ທີ່ ຫ້ອງທົດສອບ ISO/17025 ທີ່ ກົມຂົນສົ່ງກຳນົດ (Technical Service)
4. ພາຫະນະທີ່ປະກອບ ແລະ ຜະລິດ ໃນ ສປປ ລາວ ຕ້ອງ ສັບເລກລະຫັດຕົວຖັງ RP ຕຳແໜ່ງ ທີ 1 ແລະ 2 ຂອງທັງໝົດ 17 ຕົວເລກລະຫັດ

Location		1	2	3	4	5	6	7	8	9	10	11	12	13	14	15	16	17
Brand		WMI			VDS						VIS							
		Identification of the manufacturer			Car Line/Series		Body Type		Engine	C/D Or T/M	Year	Factory Location	Serial Number					
xxx	King Cabin	R	P	x	x	x	x	x	x	x	x	x	x	x	x	x	x	x


ການຜັນຂະຫຍາຍ ນິຕິກຳລຸ່ມກົດໝາຍ


2. ຮ່າງ ຂໍ້ຕົກລົງຂອງ ລັດຖະມົນຕີ ກະຊວງ ຍທຂ ກ່ຽວກັບການການສ້າງຕັ້ງກວດກາສະພາບເຕັກນິກຍານພາຫະນະທາງບົກ


- ກຳນົດກົນໄກ ແລະ ເງື່ອນໄຂໃນການສ້າງຕັ້ງສູນກວດກາເຕັກນິກ
  - ຂະໜາດສູນກວດກາ ລົດແຕ່ລະປະເພດ
  - ອຸປະກອນທີ່ຈະຕິດຕັ້ງສູນກວດກາລົດແຕ່ລະປະເພດ
  - ຈຳນວນຊ່ອງກວດກາເຕັກນິກຍານພາຫະນະ
- ກຳນົດຮອບວຽນໃນການກວດກາສະພາບເຕັກນິກ ລົດແຕ່ລະປະເພດ ເຊັ່ນ:
  - ລົດໃໝ່ ປະເພດ ລົດຈັກ 2, 3 ແລະ 4 ລໍ້ ແລະ ລົດເບົາ ມີກຳນົດນຳໃຊ້ 2 ປີ, ຫຼັງຈາກນັ້ນ ໃຫ້ກວດກາເຕັກນິກຄືນທຸກໆປີ.
  - ລົດນຳເຂົ້າທີ່ນຳໃຊ້ແລ້ວໃຫ້ກວດກາເຕັກນິກທຸກໆປີ (ລົດຈັກ 2, 3 ແລະ 4 ລໍ້, ລົດເບົາ)
  - ລົດຂົນສົ່ງສິນຄ້າ ແລະ ໂດຍສານ ກໍລະນີເປັນລົດຂຶ້ນທະບຽນໃໝ່ ແມ່ນ 1 ປີ ແລະ ໃຫ້ກວດກາ ທຸກ 6 ເດືອນ ພາຍຫຼັງກວດການຳໃຊ້
- ຂັ້ນຕອນການກວດກາ ແລະ ຄ່າມາດຕະຖານໃນການກວດກາ
  - ປະເພດລົດຈັກ 2 ລໍ້, 3 ລໍ້ 4 ລໍ້, ລົດເບົາ, ລົດຂົນສົ່ງໂດຍສານ ແລະ ສິນຄ້າ
  - ຄ່າມາດຕະຖານການກວດກາລົດແຕ່ລະປະເພດ ເຊັ່ນ: ຫ້າມລໍ້, ຄວາມໄວຂອງລົດ, ໄຟສ່ອງສະຫວ່າງ, ຢາງຕີນລົດ, ຊ່ວງລ່າງ, ຂະໜາດຂອງລົດ, ມົນລະພິດ (ສຽງ ແລະ ຄັວນ), ຄວາມປອດໄພຂອງໜ້ໍໄຟ, ຟິມຕິດແກ້ວລົດ ແລະ ອື່ນ
- ກຳນົດຄວາມຮັບຜິດຊອບໃນການຄຸ້ມຄອງ ເຊັ່ນ: ການອອກອະນຸຍາດສ້າງຕັ້ງ, ການລົງກວດກາປະມົນຜົນ ສູນກວດກາເຕັກນິກ ຂອງ ສູນກາງ ແລະ ທ້ອງຖິ່ນ (ຂະໜາດໃນການອອກອະນຸຍາດ)
- ກຳນົດ ການກວດກາສະພາບເຕັກນິກລົດ ຕາມສາຍທາງ Roadside Inspection
- ສ້າງຄູ່ມື ວິທີການກວດກາສະພາບເຕັກນິກລົດ ແຕ່ລະປະເພດ

ການຜັນຂະຫຍາຍ ນິຕິກຳລຸ່ມກົດໝາຍ

- ມີ 7 ໝວດ
- 29 ມາດຕາ
- ເງື່ອນໄຂ ມາດຖານການສ້າງຕັ້ງສູນກວດກາເຕັກນິກ
- ກຳນົດຄ່າມາດຕະຖານ ໃນການກວດກາ ເຕັກນິກລົດເຊັ່ນ
  - ຫ້າມລໍ້, ຊ່ອງລ່າງລົດ, ຫ້ອງໂດຍສານພາຍໃນລົດ, ໄຟສ່ອງສະຫວ່າງ, ມົນລະພິດ, ຢາງຕີນລົດ, ຟິມກ່ອງແສງ, ໝໍ້ໄຟ, ຂະໜາດຂອງລົດ
- ສ້າງຄູ່ມື ວິທີການກວດກາລົດຕົວຈິງ ຂອງລົດແຕ່ລະປະເພດ








ການຜັນຂະຫຍາຍ ນິຕິກຳລຸ່ມກົດໝາຍ


ຄູ່ມືການກວດກາສະພາບເຕັກນິກ ລົດ EV



xEV ລາຍການກວດກາຍານພາຫະນະໄຟຟ້າ-EV ສຳລັບການກວດກາປະຈຳປີ


ລາຍການກວດກາປະຈຳປີຂອງຍານພາຫະນະໄຟຟ້າ-EV

1. ຂັ້ນຕອນກ່ອນການກວດກາ




xEV ລາຍການກວດກາຍານພາຫະນະໄຟຟ້າ-EV ສຳລັບການກວດກາປະຈຳປີ

2. ຄວາມຕ້ອງການອຸປະກອນປ້ອງກັນສ່ວນບຸກຄົນ (PPE) ຄວາມຍອດໃຫ້ການກວດ



xEV ລາຍການກວດກາຍານພາຫະນະໄຟຟ້າ-EV ສຳລັບການກວດກາປະຈຳປີ



xEV ລາຍການກວດກາຍານພາຫະນະໄຟຟ້າ- EV ສຳລັບການກວດກາປະຈຳປີ

3. ລາຍການກວດກາຍານພາຫະນະໄຟຟ້າ- EV ປະຈຳປີ

MID – ຂໍ້ບົກພ່ອງເລັກນ້ອຍ	MaD – ຂໍ້ບົກພ່ອງຕົ້ນຕໍ	DD – ຂໍ້ບົກພ່ອງອັນຕະລາຍ
ການລະເມີດຂໍ້ບົກພ່ອງເລັກນ້ອຍ- MiD ເປັນສຽງຂໍ້ສັງເກດ ແລະຈະບໍ່ຍັບຍັ້ງໃນຂັ້ນຕອນການກວດສຳລັບ	ການລະເມີດຂໍ້ບົກພ່ອງຕົ້ນຕໍ- MaD ການກວດສຳ ຖືກຍັບຍັ້ງ ການຍັບຍັ້ງ ຈຳເປັ້ນຕ້ອງມີຄວາມສາມາດໃນການສ້ອມແປງ	ການລະເມີດຂໍ້ບົກພ່ອງອັນຕະລາຍ- DD ກວດສຳ ແລະ ຕ້ອງການຕິດຕໍ່ສື່ສານກັບຜູ້ປະກອບ

ຫົວຂໍ້	ຂັ້ນຕອນຕໍ່ໄປສຳລັບການກວດກາ	ລາຍການກວດກາ	ປະເພດ ຜິດ ບົກພ່ອງ	ຂໍ້ບົກພ່ອງ	
				ນ້ອຍເລັ່ວ	ນ້ອຍ
ສ່ວນປະກອບ ຂັ້ນຕອນຄວາມປອດໄພ	1. ຕັ້ງຄ່າສຳລັບສ່ວນທີ່ຄວາມປອດໄພ ສຳລັບລະບົບໄຟຟ້າ ແລະ ລະບົບໄຟຟ້າ ແລະ ລະບົບ ແລະ ລະບົບ ແລະ ລະບົບ


ການຜັນຂະຫຍາຍ ນິຕິກຳລຸ່ມກົດໝາຍ


3. ຮ່າງ ຂໍ້ຕົກລົງຂອງ ລັດຖະມົນຕີ ກະຊວງ ຍທຂ ວ່າດ້ວຍການຂຶ້ນທະບຽນ ແລະ ການຄຸ້ມຄອງຍານພາຫະນະທາງບົກ ໃນ ສປປ ລາວ


- ກຳນົດຂັ້ນຕອນ ແລະ ເງື່ອນໄຂ ໃນການຂຶ້ນທະບຽນ ຍານພາຫະນະ ທຸກປະເພດ ຄື: ລົດຈັກ 2 ລໍ້, 3 ລໍ້, 4 ລໍ້, ລົດເມົ້າ, ຂົນສົ່ງໂດຍສານສິນຄ້າ, ກົນຈັກໜັກ ແລະ ກະສິກຳ
- ການຂຶ້ນທະທະບຽນ ແລະ ການຄຸ້ມຄອງ ຍານພາຫະນະ ແບບນຳເຂົ້າຖາວອນ, ແບບຊົ່ວຄາວ
- ເງື່ອນໄຂການກຳນົດຄວາມແຮງ ແລະ ການຈັດປະເພດປ້າຍທະບຽນລົດ ໃຫ້ ລົດແຕ່ລະປະເພດ
- ເງື່ອນໄຂ ຊື້ຂາຍ ໂອນກຳມະສິດ, ການຍົກຍ້າຍ ການຄຸ້ມຄອງ ຍານພາຫະນະເປັນຄັນ, ປ້າຍທະບຽນງາມທີ່ໄດ້ຈາກການປະມູນ
- ການຟື້ນຟູ ແລະ ການຕິດຕັ້ງຕໍ່ເຕີມ ຍານພາຫະນະທາງບົກ
- ການຄຸ້ມຄອງຍານພາຫະນະ ທີ່ໄປຈຳນຳ ແລະ ຍານພາຫະນະທີ່ ຈາກການເຊົ່າສິນເຊື່ອ
- ພາຫະນະປະນອມຄະດີ ແລະ ປ້າຍທະບຽນລົດເຄື່ອນໄຫວພິເສດ
- ການກຳນົດໜ່ວຍງານຂອງລັດ ທີ່ໄປປະຈຳຢູ່ ກອງທະບຽນຍານພາຫະນະທາງບົກ
- ການແບ່ງຄວາມຮັບຜິດຊອບ ຂອງກອງທະບຽນຍານພາຫະນະທາງບົກ ຂັ້ນແຂວງ, ນະຄອນຫຼວງ ແລະ ເມືອງ
- ການປ່ຽນຊື່ ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ເປັນ ກອງທະບຽນຍານພາຫະນະທາງບົກ


ການຜັນຂະຫຍາຍ ນິຕິກຳລຸ່ມກົດໝາຍ


- ມີ 9 ໝວດ
- 30 ມາດຕາ
- ເງື່ອນໄຂ ການຂຶ້ນທະບຽນ, ການຄຸ້ມຄອງພາຫະນະ ນຳເຂົ້າຖາວອນ, ຊົ່ວຄາວ
- ການກຳນົດ ເງື່ອນໄຂ ແລະ ມາດຕະການຕ່າງໆ ແກ່ ຍານພາຫະນະ ໃຫ້ມີຄວາມຫັດກຸ່ມ
- ການກຳນົດໜ່ວຍງານ ປະຈຳຢູ່ ກອງທະບຽນຍານພາຫະນະທາງບົກ
- ການແບ່ງຄວາມຮັບຜິດຊອບ ຂອງກອງທະບຽນຍານພາຫະນະແຕ່ ລະຂັ້ນ














ການສຶກສາແນະນຳ ນະໂຍບາຍ ການຢຸດເຊົາການນຳໃຊ້ລົດ ທີ່ນ້ຳມັນເຊື້ອໄຟ ໃນ ສປປ ລາວ

ICE Phaseout Policy in Lao PDR

ປະກອບມີ 7 ມາດຕະການ ຄື:

1. ກຳນົດສະຕິກເກີ ການປ່ອຍມົນລະພິດ ສຳລັບການນຳເຂົ້າຍານພາຫະນະທີ່ນຳໃຊ້ນ້ຳມັນເຊື້ອໄຟ Designate the Emission Sticker for import (ICE Vehicle)
2. ຈຳກັດປະລິມານ ຫຼື ຢຸດນຳໃຊ້ຍານພາຫະນະທີ່ນ້ຳໃຊ້ນ້ຳມັນເຊື້ອໄຟ Limitation or BAN ICE Vehicle
3. ກຳນົດອາຍຸການໃຊ້ງານ ສຳລັບການນຳເຂົ້າຍານພາຫະນະທີ່ນຳໃຊ້ແລ້ວ Age limitation on import old vehicle
4. ຂຶ້ນພາສີອາກອນໃນການນຳເຂົ້າຍານພາຫະນະທີ່ນຳໃຊ້ນ້ຳມັນເຊື້ອໄຟ Increase Custom Duty for ICE Vehicle
5. ເພີ່ມຮອບວຽນການກວດກາສະພາບເຕັກນິກໃຫ້ຫລາຍຂຶ້ນ Increase road Worthiness test frequency (Inspection)
6. ກຳນົດ ອາຍຸການໃຊ້ງານຂອງຍານພາຫະນະ End of life vehicle enforcement
7. ນະໂຍບາຍຈູງໃຈໃນການທຳລາຍ / ຊື້ຄືນສິ່ງເສດເຫຼືອສຳລັບລົດທີ່ນຳໃຊ້ນ້ຳມັນເຊື້ອໄຟ ICE Vehicle Scrapping Incentive/ buy back

ຮູບຮ່າງ ແລະ ຄວາມສາມາດຂອງເວັບໄຊ




ຊື່ ເວັບໄຊທີ່ພັດທະນາ ແລະ ຂໍ້ສະເໜີ ກ່ຽວກັບຊື່ ຂອງ ເວັບໄຊ

ຊື່ ປັດຈຸບັນ ໂດເມນ	ທາງເລືອກ (ຊື່) ໂມເມນ
ww.ev.mtsvte.com	www.dotlao.gov.la
	www.dot.gov.la
	www.dotev.gov.la
	ww.ev.mtsvte.com

1) ຂໍ້ມູນຂ່າວສານ ດ້ານມາດຕະຖານດ້ານຄວາມປອດໄພຂອງລົດ EV
2) ການເຄື່ອນໄຫວ ພັດທະນາດ້ານເຕັກໂນໂລຊີ ລົດ EV ທົ່ວໂລກ,
3) ສະຖານທີ່ ບໍລິການສະຖານີສາກສາທາລະນະ ໃນ ສປປ ລາວ,
4) ເຄື່ອງມືສົມທຽບ ຄ່າໃຊ້ຈ່າຍລະຫວ່າງລົດນ້ຳມັນ ແລະ ໄຟຟ້າ ເພື່ອການຕັດສິນໃຈໃນຊື້ ລົດໄຟຟ້າ Total Cost of Owner "TCO",
5) ສັງລວມ ສະຖິຕິການນຳເຂົ້າ-ຂົ້ນທະບຽນຢ່າງທັນການ,
6) ການເຊື່ອມຂໍ້ມູນການຊື້ຂາຍຈາກບັນດາຮ້ານຈຳໜ່າຍລົດ-ໂຮງງານປະກອບລົດ ແລະ
7) ການສົ່ງຂໍ້ມູນການສັບເລກຖັງລົດ ຈາກ ໂຮງງານ ຫາ ກົມຂົນສົ່ງ ແລະ
8) ເຊື່ອມ ກັບ ເວັບໄຊອື່ນພາຍນອກ ແລະ ຍັງສາມາດ ຕໍ່ຍອດໃນການພັດທະນາ ໃຫ້ທັນສະໄໝໃນອະນາຄົດ

ສະຫຼຸບ

1. ຮ່າງ ທັງ 3 ສະບັບ ໄດ້ຮັບການທາບທາມ 3 ຄັ້ງ ແລະ ມີການປັບປຸງຕາມ ຄຳເຫັນ ຂອງ ບັນດາຂະແໜງການທົ່ວປະເທດ, ຜູ້ປະກອບການ ແລະ ສະມາຄົມຍານພາຫະນະ ແຫ່ງ ສປປ ລາວ,
2. ສ້າງຂຶ້ນ ພາຍໃຕ້ ກົດໝາຍວ່າດ້ວຍຍານພາຫະນະທາງບົກ, ດຳລັດວ່າດ້ວຍຄຸ້ມຄອງທຸລະກິດຍານພາຫະນະທາງບົກ ແລະ ສົນທິສັນຍາ MRA
3. ສ້າງຂຶ້ນ ພາຍໃຕ້ ລະບຽບກົດໝາຍ ຂອງ ສປປ ລາວ ວາງອອກ
4. ສອດຄ່ອງກັບ ສົນທິສັນຍາສາກົນ, ການຫັນປ່ຽນຮູບແບບການນຳເຂົ້າ ໃຫ້ ເປັນໄຕຕາມກົນໄກ ສາກົນ ກຳນົດ ໃນການນຳເຂົ້າ, ການຢັ້ງຢືນ, ການທົດສອບ ແລະ ການກວດກາຄວາມຖືກຕ້ອງ ແລະ ຂະບວນການກວດກາເຕັກນິກ
5. ເລັ່ງລັດ ໃຫ້ສຳເລັ່ງ ຮ່າງນິຕິກຳ 3 ສະບັບ ຮັບຮອງພາຍໃນ ເດືອນ ມິຖຸນາ 2024
6. ຈັດຕັ້ງເຜີຍແຜ່ ຂອບເຂດທົ່ວປະເທດ ໃຫ້ ສຳເລັດ ພາຍໃນ ເດືອນ ກັນຍາ 2024 ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ


Overall Component
Durability Testing
Polymer Based
Components
Belts & Hoses
Product
Packaging
Wheels
On Vehicle Winter Testing
Tire

ขอบใจ